


# ຮັບສະໝັກ ເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ ສູ່ຄວາມສຳເລັດກັບພວກເຮົາ

ທຄຕລ
BCEL

**ຕຳແໜ່ງພະນັກງານສັນຍາຈ້າງຕ້ອນຮັບ  ຈຳນວນ 04 ຕຳແໜ່ງ**

**ໂມງເຮັດວຽກ (08:00-16:00 ໂມງ)**

- **ລາຍຮັບພື້ນຖານກ່ອນອາກອນ 3.648.000 ກີບ**

## ➢ ໜ້າທີ່ຮັບຜິດຊອບຫຼັກ

- ສອບຖາມຈຸດປະສົງ ການໃຊ້ບໍລິການຂອງລູກຄ້າ ແລະ ແນະນຳລູກຄ້າກົດບັດຄິວ
- ຊ່ວຍອະທິບາຍ ແລະ ແນະນຳລູກຄ້າທີ່ເຂົ້າມາໃຊ້ບໍລິການໃນການປະກອບຟອມ ຫຼື ຊ່ວຍລູກຄ້າຂຽນຟອມໃນກໍລະນີລູກຄ້າບໍ່ສາມາດຂຽນເອງໄດ້ ແຕ່ລາຍເຊັນຕ້ອງແມ່ນລູກຄ້າເຊັນເອງ
- ຊ່ວຍແນະນຳຄຸນລັກສະນະຜະລິດຕະພັນຕ່າງໆ, ວິທີການ ແລະ ຂັ້ນຕອນການສະໝັກນຳໃຊ້ ໃຫ້ລູກຄ້າໂດຍ ພື້ນຖານ
- ຈັດສັນລູກຄ້າເຂົ້າໃຊ້ບໍລິການຕາມເຄົ້າເຕີ ທີ່ Teller ໄດ້ກົດເອີ້ນຄິວ
- ກະກຽມ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍຂອງແບບຟອມ
- ແນະນຳລູກຄ້າ ຫຼື ຊ່ວຍນຳສົ່ງລູກຄ້າໄປຈຸດບໍລິການຕ່າງໆ ຕາມຈຸດປະສົງການໃຊ້ບໍລິການຂອງລູກຄ້າ
-

## ➢ ເງື່ອນໄຂຜູ້ສະໝັກ

- ເພດ: **ຍິງ**, ອາຍຸ ບໍ່ເກີນ 25 ປີ
- ສະຖານະພາບ: ໂສດ,
- ລະດັບການສຶກສາ: ຈົບມັດທະຍົມສຶກສາຕອນປາຍ ຂຶ້ນໄປ (ກໍລະນີ ຈົບວິຊາສະເພາະ ແມ່ນບໍ່ຈຳກັດສາຂາຮຽນ) ຫຼື ກໍລະນີ ທີ່ກຳລັງສຶກສາຢູ່ແມ່ນສາມາດສະໝັກໄດ້ ແຕ່ເມື່ອຖືກຄັດເລືອກເປັນພະນັກງານຕ້ອງສາມາດປະຕິບັດຕາມໂມງເວລາການເຮັດວຽກຂອງ ທຄຕລ ໄດ້.
- ມີຄວາມຮູ້ພາສາຕ່າງປະເທດໃດໜຶ່ງ (ພາສາອັງກິດ, ພາສາຈີນ ຫຼື ພາສາຫວຽດນາມ) ຍິ່ງເປັນການດີ
- ມີບຸກຄະລິກກະພາບດີ, ມີມະນຸດສຳພັນດີ, ມີທັກສະໃນການສື່ສານ ແລະ ການນຳສະເໜີຂາຍຜະລິດຕະພັນ
- ມີຄວາມຮູ້ພື້ນຖານກ່ຽວກັບຜະລິດຕະພັນ ຂອງ ທຄຕລ

## ➢ ຄຸນລັກສະນະເພີ່ມຕື່ມຂອງຜູ້ສະໝັກ

- ຜູ້ສະໝັກຕ້ອງເປັນຄົນສັນຊາດລາວ, ມີສຸຂະພາບແຂງແຮງດີ
- ມີຄວາມຊື່ສັດບໍລິສຸດ, ມະນຸດສຳພັນດີ, ບຸກຄະລິກວ່ອງໄວ ຫ້າວຫັນ ແລະ ອົດທົນ
- ລະອຽດຮອບຄອບ, ມີລະບຽບວິໄນ ແລະ ມີຄວາມຮັບຜິດຊອບສູງ, ມີຄວາມສາມັກຄີ, ສາມາດເຮັດວຽກເປັນທີມໄດ້
- ບໍ່ເຄີຍກະທຳຄວາມຜິດໂດຍເຈດຕະນາທີ່ຜິດກົດໝາຍຂອງ ສປປ ລາວ ຫຼື ຢູ່ໃນຂັ້ນຕອນການດຳເນີນຄະດີໃດໜຶ່ງ, ບໍ່ເຄີຍຖືກໄລ່ອອກ ຫຼື ປະລະໜ້າທີ່ຈາກອົງກອນໃດໜຶ່ງມາກ່ອນ
- ສາມາດເຮັດວຽກພາຍໃຕ້ຄວາມກົດດັນ, ກົງຕໍ່ເວລາ ແລະ ມີຄວາມເສຍສະຫຼະ. ມີໃຈຮັກໃນວຽກງານບໍລິການ, ວຽກງານທະນາຄານ ແລະ ວຽກງານທີ່ການຈັດຕັ້ງມອບໝາຍໃຫ້

## ➢ ວິທີສະໝັກວຽກ

ຜູ້ທີ່ມີເງື່ອນໄຂຄົບຖ້ວນຕາມການປະກາດ ແລະ ມີຄວາມສົນໃຈແມ່ນໃຫ້ປະກອບຂໍ້ມູນ ໃຫ້ຄົບຖ້ວນດັ່ງນີ້:

- ເຂົ້າໄປປະກອບແບບຟອມສະໝັກທາງອອນລາຍ ຕາມ Link ຂອງ Google Form ສະແກນ QR ດ້ານລຸ່ມນີ້ ຫຼື ຕິດຕໍ່ພົວພັນດ້ວຍຕົນເອງໄດ້ ທີ່ **ພະແນກຈັດຕັ້ງ-ພະນັກງານ, ຊັ້ນ 04 ຕຶກ C, ທຄຕລ ສຳນັກງານໃຫຍ່ ຫຼື ໂທສອບຖາມຂໍ້ມູນກ່ອນໄດ້ທີ່ 021 213200 ຕໍ່ 417 ກຳນົດເລີ່ມຮັບຂໍ້ມູນສະໝັກຕັ້ງແຕ່ວັນທີ 05-16/02/2024.**

**ໝາຍເຫດ**: ບໍ່ອະນຸຍາດໃຫ້ພໍ່ແມ່, ອ້າຍເອື້ອຍນ້ອງ ຫຼື ພີ່ນ້ອງຂອງຜູ້ສະໝັກງານມາພົວພັນສະໝັກວຽກແທນ.

**ຟອມສະໝັກງານ**

1555 | BCEL Bank